ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ ເລກທີ...1784.../ປກສ.

ນະຄອນຫຼວງວຽງຈັນ, ລົງວັນທີ...02...07...2018

# ຂໍ້ຕົກລົງ

# ວ່າດ້ວຍການຄຸ້ມຄອງ ແລະ ຜະລິດຕາປະທັບວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວຽກງານປ້ອງກັນຄວາມສະຫງົບ ແຫ່ງຊາດ ສະບັບເລກທີ 018/ສພຊ, ລົງວັນທີ 19 ທັນວາ 2013.
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ສະບັບເລກທີ 218/ນຍ, ລົງວັນທີ 19 ກໍລະກົດ 2005.
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.

## ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການຄຸ້ມຄອງ ແລະ ຕິດຕາມກວດກາ ກ່ຽວກັບການຜະລິດຕາປະທັບ ບັນດາ ວິສາຫະກິດ ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ຕາປະທັບ ບັນດາ ວິສາຫະກິດມີຄວາມສະດວກ, ວ່ອງໄວ, ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 2 ຄາດໝາຍ

ເຮັດໃຫ້ການຄຸ້ມຄອງ, ຜະລິດ ແລະ ຕິດຕາມ, ກວດກາ ການນຳໃຊ້ຕາປະທັບ ວິສາຫະກິດ ຢູ່ບັນດາ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ດຳເນີນໄປດ້ວຍຄວາມສະດວກ, ວ່ອງໄວ ລວມທັງຂັ້ນຕອນ, ເວລາການຜະລິດຕາປະທັບໃຫ້ສັ້ນລົງຕື່ມ ແລະ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງບັນດາ ວິສາຫະກິດ ຕາມຄວາມຮຽກຮ້ອງຕ້ອງການພ້ອມທັງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 3 ຄວາມສຳຄັນຂອງຕາປະທັບວິສາຫະກິດ

ຕາປະທັບແມ່ນພາຫະນະພິເສດ ທີ່ມີຄຸນຄ່າທາງດ້ານກົດໝາຍຂອງບັນດາເອກະສານ ຊຶ່ງສະແດງໃຫ້ເຫັນເຖິງໜ້າທີ່, ຂອບເຂດສິດ ຂອງບັນດາວິສາຫະກິດ ໃນທົ່ວປະເທດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.



Scanned with CamScanner

## ໝວດທີ 2

## ຮູບແບບ, ຂະໜາດ, ການຜະລິດ ແລະ ຈົດທະບຽນຕາປະທັບວິສາຫະກິດ

### ມາດຕາ 4 ຮູບແບບ ແລະ ຂະໜາດຕາປະທັບ

ຮູບແບບ ແລະ ຂະໜາດຕາປະທັບ ມີ ດັ່ງນີ້:

1. ຕາປະທັບຮູບໜ່ວຍໄຂ່: ແມ່ນຕາປະທັບຂອງ ບັນດາລັດວິສາຫະກິດ, ມີຂະໜາດເສັ້ນຜ່າໃຈກາງທາງຕັ້ງ 3 ຊັງຕີແມັດ ແລະ ເສັ້ນຜ່າໃຈກາງທາງນອນ 5 ຊັງຕີແມັດ;

2. ຕາປະທັບ 5 ລ່ຽມ: ແມ່ນຕາປະທັບຂອງບັນດາສະມາຄົມ ທີ່ກ່ຽວຂ້ອງກັບທຸລະກິດການຄ້າ, ມີຂະໜາດເສັ້ນຜ່າໃຈກາງທາງຕັ້ງ ແລະ ເສັ້ນຜ່າໃຈກາງທາງນອນ 3,5 ຊັງຕີແມັດ;

3. ຕາປະທັບ 8 ລ່ຽມມົນທົນ: ແມ່ນຕາປະທັບຂອງບັນດາຫົວໜ່ວຍທຸລະກິດຕ່າງໆ. ມີຂະໜາດເສັ້ນຜ່າໃຈກາງທາງຕັ້ງ ແລະ ເສັ້ນຜ່າໃຈກາງທາງນອນ 3,5 ຊັງຕີແມັດ;

4. ຕາປະທັບ 8 ລ່ຽມຍາວ: ແມ່ນຕາປະທັບຂອງບັນດາວິສາຫະກິດລວມໝູ່, ມີເສັ້ນຜ່າໃຈກາງທາງຕັ້ງ 3 ຊັງຕີແມັດ ແລະ ເສັ້ນຜ່າໃຈກາງທາງນອນ 5 ຊັງຕີແມັດ.

### ມາດຕາ 5 ການຜະລິດຕາປະທັບ

ການຜະລິດຕາປະທັບ ມີ ດັ່ງນີ້:

1. ການຜະລິດຕາປະທັບວິສາຫະກິດ ມອບໃຫ້ບັນດາ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງໃນທົ່ວປະເທດ ເປັນຜູ້ຜະລິດ ແລະ ຄຸ້ມຄອງໃຫ້ຖືກຕ້ອງຕາມຫຼັກການວິຊາສະເພາະ

2. ການຜະລິດຕາປະທັບວິສາຫະກິດ ໃຫ້ຜະລິດ ຕາມທີ່ໄດ້ລະບຸໄວ້ ຢູ່ໃນໃບທະບຽນວິສາຫະກິດເທົ່ານັ້ນ.

### ມາດຕາ 6 ການຈົດທະບຽນ

ການຈົດທະບຽນ ມີ ດັ່ງນີ້:

1. ພາຍຫຼັງຜະລິດສຳເລັດແລ້ວຕາປະທັບທຸກໜ່ວຍຕ້ອງໄດ້ຈົດທະບຽນ ແລະ ສຳເນົາຮູບແບບຕາປະທັບໄວ້ນຳຫ້ອງຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ບັນດາ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;

2. ບັນດາ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ອອກໃບອະນຸຍາດນຳໃຊ້ຕາປະທັບ ພ້ອມທັງສຳເນົາຕົ້ນສະບັບ; ການຈົດທະບຽນຕາປະທັບ ແມ່ນການຮັບຮູ້ ທີ່ມີຄຸນຄ່າຖືກຕ້ອງ ທາງດ້ານກົດໝາຍ.

## ໝວດທີ 3

## ສິດ, ໜ້າທີ່ການຄຸ້ມຄອງ ແລະ ຜະລິດຕາປະທັບວິສາຫະກິດ

### ມາດຕາ 7 ສິດ, ໜ້າທີ່ຂອງການຄຸ້ມຄອງການຜະລິດ ແລະ ຈົດທະບຽນ ຕາປະທັບວິສາຫະກິດ

ສິດ, ໜ້າທີ່ ຂອງການຄຸ້ມຄອງການຜະລິດ ແລະ ຈົດທະບຽນ ຕາປະທັບວິສາຫະກິດ ມີ ດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ

- ຊີ້ນຳການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງ ພັກ-ລັດ ກ່ຽວກັບວຽກງານຜະລິດຕາປະທັບບັນດາວິສາຫະກິດ ໃນຂອບເຂດທົ່ວປະເທດ;

- ຕິກລົງບັນຫາຍຸດທະສາດ ກ່ຽວກັບການຜະລິດຕາປະທັບ ບັນດາ ວິສາຫະກິດ ແລະ ຊີ້ນຳໂດຍກົງກ່ຽວກັບວຽກງານຜະລິດຕາປະທັບໃນຂອບເຂດທົ່ວປະເທດ;

- ອອກຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານການຈົດທະບຽນ ແລະ ການຜະລິດຕາປະທັບ ບັນດາ ວິສາຫະກິດ ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ ຢ່າງມີປະສິດທິຜົນ;

- ເປັນເສນາທິການໃຫ້ກະຊວງປ້ອງກັນຄວາມສະຫງົບ ໃນການຄົ້ນຄວ້າ, ວາງແຜນການ ຊີ້ນຳມະຫາພາກກ່ຽວກັບ ການຜະລິດ ແລະ ຄຸ້ມຄອງຕາປະທັບ ບັນດາ ວິສາຫະກິດ ໃນຂອບເຂດທົ່ວປະເທດ;

- ນຳພາ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດທິດທາງແຜນການອັນລະອຽດກ່ຽວກັບການຜະລິດຕາປະທັບ ວິສາຫະກິດ ຢູ່ບັນດາ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;

- ນຳສະເໜີຂັ້ນເທິງ ອອກຄຳແນະນຳ, ແຈ້ງການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການຜະລິດຕາປະທັບ ບັນດາ ວິສາຫະກິດ;

- ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫຼື ແກ້ໄຂ ຕໍ່ການລະເມີດລະບຽບ, ຫຼັກການ ແລະ ກົດໝາຍກ່ຽວກັບການຜະລິດຕາປະທັບບັນດາ ວິສາຫະກິດ ທີ່ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

- ປະສານສົມທົບກັບບັນດາຂະແໜງທີ່ກ່ຽວຂ້ອງຕ່າງໆ ເພື່ອຈັດກອງປະຊຸມແລກປ່ຽນຂໍ້ມູນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

2. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ

- ຊີ້ນຳ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາກ່ຽວກັບການຜະລິດຕາປະທັບບັນດາ ວິສາຫະກິດ ໃນຂອບເຂດຕົນຮັບຜິດຊອບ;

- ຄຸ້ມຄອງ, ຜະລິດຕາປະທັບ ແລະ ອອກໃບອະນຸຍາດນຳໃຊ້ຕາປະທັບ ບັນດາ ວິສາຫະກິດ ຕາມການອະນຸຍາດເຫັນດີຈາກຂັ້ນເທິງ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

- ສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝ ຕໍ່ຜູ້ທີ່ລະເມີດການຜະລິດຕາປະທັບວິສາຫະກິດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

- ປະສານສົມທົບກັບບັນດາຂະແໜງການຕ່າງໆ ເພື່ອແລກປ່ຽນຂໍ້ມູນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ຮັບປະກັນຄວາມຖືກຕ້ອງໃນການອອກແບບ, ການກຳນົດເນື້ອໃນ, ຮູບແບບຕາປະທັບ ວິສາຫະກິດ ຕາມດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ ຕາປະທັບ;

- ລາຍງານ, ສະໜອງ ຂໍ້ມູນກ່ຽວກັບການຄຸ້ມຄອງ ແລະ ຜະລິດຕາປະທັບ ບັນດາ ວິສາຫະກິດ ໃຫ້ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃນແຕ່ລະໄລຍະ ຕາມສາຍຕັ້ງວິຊາສະເພາະ;

- ກໍລະນີ ມີການປອມແປງຕາປະທັບ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເປັນຜູ້ຢັ້ງຢືນຄວາມຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຂອງຕາປະທັບວິສາຫະກິດນັ້ນ.

### ມາດຕາ 8 ການຄຸ້ມຄອງ ແລະ ການກວດກາການຜະລິດຕາປະທັບ

ການກວດກາວຽກງານຜະລິດຕາປະທັບ ຕ້ອງປະຕິບັດ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ຕາມການແບ່ງຂັ້ນຄຸ້ມຄອງ;
2. ກວດກາຕາມແຜນການ, ຕາມໄຕມາດ ແລະ ປີ ຢ່າງເປັນປົກກະຕິ;
3. ກວດກາຕາມກໍລະນີຈຳເປັນ ແລະ ສຸກເສີນ.



Scanned with CamScanner

## ໝວດທີ 4
## ຄ່າທຳນຽມ, ຄ່າບໍລິການ ແລະ ງົບປະມານ

**ມາດຕາ 9 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ມີ ດັ່ງນີ້:

1. ການເກັບຄ່າທຳນຽມ, ຄ່າບໍລິການໃນການຈົດທະບຽນ ແລະ ຜະລິດຕາປະທັບ ບັນດາ ວິສາຫະກິດ ແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ;

2. ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນຜູ້ກຳນົດລະບຽບການສະເພາະ ໃຫ້ບັນດາກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ.

**ມາດຕາ 10 ງົບປະມານ**

ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ຂື້ນແຜນງົບປະມານນຳໃຊ້ໃນການເຄື່ອນໄຫວໜ້າທີ່ວຽກງານຜະລິດຕາປະທັບ ວິສາຫະກິດ ໂດຍຜ່ານ ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ນຳສະເໜີຂັ້ນເທິງພິຈາລະນາ ແລະ ຕົກລົງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 11 ຂໍ້ຫ້າມ**

ຫ້າມເຈົ້າໜ້າທີ່ຜະລິດຕາປະທັບວິສາຫະກິດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ຮັບເອົາສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. ກົດໜ່ວງຖ່ວງດຶງ, ແກ່ຍາວເວລາ ອອກເອກະສານຂໍອະນຸຍາດຜະລິດຕາປະທັບ ວິສາຫະກິດ;

3. ເປີດເຜີຍຂໍ້ມູນອັນເປັນຄວາມລັບຂອງວຽກງານວິຊາສະເພາະ;

4. ຈັດຊື້ວັດສະດຸ, ອຸປະກອນ ກ່ຽວກັບການຜະລິດຕາປະທັບ ວິສາຫະກິດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ອຳນາດ, ໜ້າທີ່ ເພື່ອອຳນວຍຄວາມສະດວກ ແລະ ກົດດັນເຈົ້າໜ້າທີ່ ໃນການຂໍອະນຸຍາດຜະລິດຕາປະທັບ ວິສາຫະກິດ ຊຶ່ງຂັດກັບກົດໝາຍ, ລະບຽບການ ແລະ ຫຼັກການວິຊາສະເພາະ;

2. ປອມແປງເອກະສານຂໍອະນຸຍາດຜະລິດຕາປະທັບວິສາຫະກິດ ເພື່ອໄປສວຍໃຊ້ເຄື່ອນໄຫວໃນທາງທີ່ຜິດກົດໝາຍ ແລະ ລະບຽບການ;

3. ຜະລິດຕາປະທັບ ບັນດາ ວິສາຫະກິດ ໂດຍບໍ່ໄດ້ຮັບອະນຸຍາດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.



Scanned with CamScanner

## ໝວດທີ 6
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 12 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 13 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີໜັກ ຫຼື ເບົາ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມກຸ່ມກອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ເປັນເຈົ້າການຊີ້ນຳ, ຕິດຕາມ, ກວດກາ ກະຕຸກຊຸກຍູ້ບັນດາ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຫ້ອງວ່າການກະຊວງ, ກົມໃຫຍ່, ກົມ, ກອງບັນຊາການ, ວິທະຍາຄານ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ຂັ້ນເມືອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ຂະແໜງອຸດສາຫະກຳ ແລະ ການຄ້າ, ແຜນການ ແລະ ການລົງທຶນ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ, ນິຕິກຳໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ

[illegible]



Scanned with CamScanner